ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

1050

ກະຊວງກະສິກຳ ແລະ ປ່າໄມ້

ກົມລ້ຽງສັດ ແລະ ການປະມົງ

ເລກທີ: 1050/ກລປ

ນະຄອນຫຼວງວຽງຈັນ, ວັນທີ 22 MAR 2024

# ແຈ້ງການ

ເຖິງ: ທ່ານຫົວໜ້າຂະແໜງລ້ຽງສັດ ແລະ ການປະມົງແຂວງ, ນະຄອນ ແລະ ນະຄອນຫຼວງວຽງຈັນ.

ເລື່ອງ: ການເພີ່ມທະວີຄວາມເອົາໃຈໃສ່ ຕໍ່ວຽກງານດູແລຮັກສາສຸຂະພາບສັດ ແລະ ການສັກຢາກັນພະຍາດ ໃຫ້ແກ່ ສັດລ້ຽງ ໃນຊ່ວງລະດູຝົນ ປີ 2024.

- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ກົມລ້ຽງສັດ ແລະ ການປະມົງ ເລກທີ 0175/ກປ, ລົງວັນທີ 25 ມັງກອນ 2022.
- ອີງຕາມ ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016.
- ອີງຕາມ ຂໍ້ມູນການລະບາດຂອງພະຍາດສັດ ທີ່ມັກເກີດຂຶ້ນເປັນປະຈຳໃນຊ່ວງລະດູຝົນ ໂດຍສະເພາະໃນໄລຍະທີ່ສະພາບອາກາດ ປ່ຽນແປງຜິດປົກກະຕິ ແລະ ເກີດຂຶ້ນຢ່າງກະທັນຫັນ.

ກົມລ້ຽງສັດ ແລະ ການປະມົງ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ພະຍາດສັດ ຍັງແມ່ນບັນຫາສຳຄັນຕົ້ນຕໍ ທີ່ສົ່ງຜົນກະທົບດ້ານລົບ ໃຫ້ແກ່ການລ້ຽງສັດ ຂອງປະຊາຊົນລາວບັນດາເຜົ່າ ຊຶ່ງໃນໄລຍະຜ່ານມາ ຍັງມີລາຍງານສະພາບການ ເກີດພະຍາດສັດ ຂຶ້ນຢູ່ໃນບາງທ້ອງຖິ່ນ ເປັນຕົ້ນແມ່ນ ພະຍາດໄຂ້ຫວັດສັດປີກ, ພະຍາດອະຫິວາໝູອາຟຣິກາ, ພະຍາດປາກເປື່ອຍລົງເລັບ, ພະຍາດເຕົ້າໂຮມເລືອດງົວຄວາຍ ອັນໄດ້ເຮັດໃຫ້ສັດລ້ຽງຂອງປະຊາຊົນເຈັບ ແລະ ລົ້ມຕາຍ ຢ່າງຕໍ່ເນື່ອງ. ສາຍເຫດຕົ້ນຕໍ ກໍ່ຍ້ອນວ່າແຫຼ່ງເຊື້ອພະຍາດ ຍັງບໍ່ທັນໄດ້ຖືກດັບສູນ, ການສັກຢາກັນພະຍາດສັດ ຍັງບໍ່ທັນໄດ້ຮັບຄວາມເອົາໃຈໃສ່ຢ່າງຈິງຈັງ ໂດຍສະເພາະການລ້ຽງສັດແບບຄອບຄົວ ເປີເຊັນການສັກຢາປ້ອງກັນພະຍາດຍັງຕໍ່າ ແລະ ບາງພະຍາດຕົ້ນຕໍ ແມ່ນຍັງບໍ່ໄດ້ຮັບການສັກຢາປ້ອງກັນ. ພ້ອມດຽວກັນນັ້ນ, ການຄຸ້ມຄອງການເຄື່ອນຍ້າຍສັດພາຍໃນປະເທດ ຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນ, ຍັງມີການ ຊື້-ຂາຍ ແລະ ເຄື່ອນຍ້າຍສັດ ໃນເວລາມີການລະບາດຂອງພະຍາດ, ຊາວກະສິກອນຈຳນວນນຶ່ງ ຂາດຄວາມເຂົ້າໃຈ ຕໍ່ວຽກງານປ້ອງກັນການແຜ່ລະບາດ ຂອງພະຍາດ ຈາກສັດສູ່ສັດ ແລະ ຈາກສັດສູ່ຄົນ ຊຶ່ງສະແດງອອກຢູ່ບ່ອນວ່າ ຍັງມີປະກົດການບໍລິໂພກຊີ້ນສັດ ທີ່ຕາຍ ໂດຍບໍ່ຮູ້ສາເຫດ ເຮັດໃຫ້ມີຄວາມສ່ຽງຕໍ່ການຕິດພະຍາດຈາກສັດ ຊຶ່ງສາມາດກໍ່ໃຫ້ເກີດການເຈັບປ່ວຍ ຫຼື ອາດເຖິງຕາຍໄດ້. ນອກຈາກນັ້ນ, ການປ່ຽນແປງຂອງສະພາບດິນຟ້າອາກາດ ຫຼື ອາກາດປ່ຽນແປງແບບກະທັນຫັນ ແລະ ບໍ່ເປັນປົກກະຕິ ອາດສົ່ງຜົນກະທົບຕໍ່ສຸຂະພາບຂອງສັດລ້ຽງ ໂດຍສະເພາະສັດທີ່ອາຍຸຍັງນ້ອຍ ແລະ ສັດທີ່ມີອາຍຸແກ່ ທີ່ມີຄວາມທົນທານບໍ່ສູງ ແລະ ສັດທີ່ລ້ຽງ ໃນເຂດທີ່ເຄີຍເກີດການລະບາດ ຂອງພະຍາດມາກ່ອນ ແມ່ນມີຄວາມສ່ຽງສູງຕໍ່ການເກີດລະບາດຄັ້ງໃໝ່.

ສະນັ້ນ, ເພື່ອຮັບປະກັນ ບໍ່ໃຫ້ເກີດມີການແຜ່ລະບາດຂອງພະຍາດສັດ ແລະ ຫຼີກລ້ຽງຜົນກະທົບ ທີ່ກ່າວມາຂ້າງເທິງນັ້ນ ກົມລ້ຽງສັດ ແລະ ການປະມົງ ຈຶ່ງອອກແຈ້ງການແນະນຳ ໃຫ້ຂະແໜງລ້ຽງສັດ ແລະ ການປະມົງແຂວງ

, ນະຄອນ ແລະ ນະຄອນຫຼວງວຽງຈັນ ເພື່ອປະຕິບັດມາດຕະການປ້ອງກັນ ແລະ ສະກັດກັ້ນ ການລະບາດຂອງພະຍາດສັດ ໃນຊ່ວງລະດູຝົນ ປີ 2024 ດັ່ງຕໍ່ໄປນີ້:

1) ໃຫ້ເພີ່ມທະວີ ແລະ ເອົາໃຈໃສ່ ຕິດຕາມເຝົ້າລະວັງ ສະພາບການລະບາດຂອງພະຍາດສັດຕາມລະດູການ ທີ່ອາດຈະເກີດຂຶ້ນ ຢູ່ໃນທ້ອງຖິ່ນຂອງຕົນ ແລະ ກະກຽມຄວາມພ້ອມ ໃນການຕອບໂຕ້ ແລະ ສະກັດກັ້ນ ການລະບາດຂອງພະຍາດສັດ ໃຫ້ທັນກັບເວລາ;

2) ເປັນເຈົ້າການປະສານສົມທົບ ກັບອົງການປົກຄອງທ້ອງຖິ່ນ ເຊັ່ນ: ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ, ອຳນາດການປົກຄອງບ້ານ, ສັດຕະວະແພດບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງໂຄສະນາເຜີຍແຜ່ ແລະ ແນະນຳໃຫ້ຊາວກະສິກອນ ທີ່ລ້ຽງສັດແບບຄອບຄົວ, ລ້ຽງເປັນກຸ່ມ ແລະ ຜູ້ປະກອບການຟາມລ້ຽງສັດ ເພື່ອເອົາໃຈໃສ່ດູແລຮັກສາສັດລ້ຽງຂອງຕົນ, ປັບປຸງສ້ອມແປງ ແລະ ປຸກສ້າງຄອກໃຫ້ແກ່ສັດລ້ຽງຢ່າງສະໝ່ຳສະເໝີ ເພື່ອປ້ອງກັນບໍ່ໃຫ້ແດດ ຫຼື ຝົນ ກະທົບໃສ່ສັດລ້ຽງໂດຍກົງ ພ້ອມທັງໂຄສະນາເຜີຍແຜ່ ກ່ຽວກັບຄວາມສຳຄັນຂອງການສັກຢາປ້ອງກັນພະຍາດໃຫ້ສັດລ້ຽງ ແລະ ໃຫ້ຄວາມຮູ້ກ່ຽວກັບວິທີການດູແລສຸຂະພາບສັດຂັ້ນພື້ນຖານ, ຄວາມອັນຕະລາຍຂອງພະຍາດຕິດຕໍ່ພະຍາດຈາກສັດສູ່ຄົນ ແລະ ວິທີການປ້ອງກັນຕົວເອງ ໃນເວລາຢູ່ໃກ້ກັບສັດເຈັບ ຫລື ສັດຕາຍ;

3) ໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດ ການສັກຢາກັນພະຍາດສັດຕາມລະດູການ ເປັນຕົ້ນແມ່ນ ພະຍາດເຕົ້າໂຮມເລືອດງົວ-ຄວາຍ, ປາກເປື່ອຍລີບເລັບ, ອະຫິວາໝູ, ອະຫິວາສັດປີກ, ນິວຄາເຊີນ, ຫູອຸດລົມອັກເສບ ແລະ ຢາກັນພະຍາດອື່ນໆ ໃຫ້ແກ່ສັດລ້ຽງຂອງປະຊາຊົນ ຢ່າງເປັນປົກກະຕິ ແລະ ຕາມກຳນົດເວລາ ໂດຍສູ້ຊົນເຮັດໃຫ້ອັດຕາການສັກຢາປ້ອງກັນພະຍາດສັດ ບັນລຸໄດ້ 70-80% ຂອງຝູງສັດແຕ່ລະຊະນິດ;

4) ປະສານງານນຳອຳນາດການປົກຄອງເມືອງ ເພື່ອອອກແຈ້ງການເຖິງອຳນາດການປົກຄອງບ້ານ ໃຫ້ເອົາໃຈໃສ່ເຝົ້າລະວັງ ແລະ ຕິດຕາມສະພາບການລະບາດຂອງພະຍາດສັດ ຢູ່ໃນຂອບເຂດບ້ານຂອງຕົນ. ໃນກໍລະນີ ທີ່ພົບເຫັນສັດເຈັບ ຫຼື ຕາຍ ໂດຍບໍ່ຮູ້ສາຍເຫດ, ຕາຍເປັນຈຳນວນຫຼາຍ ໃນເວລາໄລ່ເລ່ຍກັນ ເຈົ້າຂອງສັດ ຕ້ອງຮີບຮ້ອນລາຍງານໃຫ້ສັດຕະວະແພດບ້ານ, ນາຍບ້ານ ຫຼື ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໂດຍດ່ວນ ເພື່ອລົງໄປກວດກາສອບສວນ ແລະ ເກັບຕົວຢ່າງສົ່ງຫ້ອງວິໄຈພະຍາດ ເພື່ອຊອກຫາສາເຫດຂອງການຕາຍ ພ້ອມທັງດຳເນີນມາດຕະການສະກັດກັ້ນ ແລະ ຕອບໂຕ້ ການລະບາດຂອງພະຍາດ ຕາມຫຼັກວິຊາການ. ຫ້າມເດັດຂາດ ບໍ່ໃຫ້ມີການຊື້-ຂາຍ ແລະ ເຄື່ອນຍ້າຍສັດອອກໄປເຂດອື່ນ ແລະ ຫ້າມບໍ່ໃຫ້ຂ້າສັດທີ່ເຈັບ ຫຼື ຄົວຊາກສັດທີ່ຕາຍ ເພື່ອນຳໄປບໍລິໂພກ ຫຼື ຈຳໜ່າຍ. ສັດທີ່ຕາຍ ແມ່ນໃຫ້ຮີບຮ້ອນ ຝັງ ຫຼື ເຜົາ ທັນທີທັນໃດ ແລະ ຫ້າມນຳສັດທີ່ຕາຍຖິ້ມລົງຫ້ວຍ, ຮ່ອງ ແລະ ສາຍແມ່ນ້ຳຕ່າງໆ;

5) ຫາກພົບວ່າມີການລະບາດຂອງພະຍາດສັດໃດໜຶ່ງ ຢູ່ໃນທ້ອງຖິ່ນຂອງຕົນ ແມ່ນໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ແຂວງ ແລະ ນະຄອນຫຼວງ ລົງສົມທົບກັບ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ອຳນາດການປົກຄອງທ້ອງຖິ່ນໂດຍໄວ ເພື່ອສະກັດກັ້ນການລະບາດຂອງພະຍາດສັດ ໂດຍໃຫ້ປະຕິບັດຕາມດຳລັດ ວ່າດ້ວຍການກັນ ແລະ ຄວບຄຸມພະຍາດສັດ ສະບັບເລກທີ 228/ລບ, ລົງວັນທີ 31 ພຶດສະພາ 2012. ພ້ອມກັນນັ້ນ ກໍ່ໃຫ້ແຈ້ງການໃຫ້ບັນດາ ແຂວງໃກ້ຄຽງຮັບຊາບ ເພື່ອເພີ່ມທະວີການເຝົ້າລະວັງ ແລະ ດຳເນີນມາດຕະການປ້ອງກັນ ການແຜ່ລະບາດຂອງພະຍາດແຕ່ຫົວທີ ແລະ ໃຫ້ລາຍງານຫາກົມລ້ຽງສັດ ແລະ ການປະມົງ ຮັບຊາບໂດຍໄວ ເພື່ອຈະໄດ້ໃຫ້ການຊ່ວຍເຫຼືອຢ່າງທັນເວລາ;

6) ໃຫ້ເອົາໃຈໃສ່ຕິດຕາມກວດກາ ແລະ ຄຸ້ມຄອງການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສັດ ຢູ່ພາຍໃນແຂວງ ແລະ ລະຫວ່າງແຂວງກັບແຂວງ ໂດຍໃຫ້ປະຕິບັດຕາມດຳລັດ ວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ສະບັບເລກທີ 230/ລບ, ລົງວັນທີ 4 ມິຖຸນາ 2012 ຢ່າງເຂັ້ມງວດ ເພື່ອປ້ອງກັນບໍ່ໃຫ້ມີການແຜ່ກະຈາຍເຊື້ອພະຍາດ ຈາກບ່ອນໜຶ່ງໄປສູ່ບ່ອນອື່ນ.

7) ເມື່ອໄດ້ຮັບແຈ້ງການສະບັບນີ້ແລ້ວ ໃຫ້ຂະແໜງລ້ຽງສັດ ແລະ ການປະມົງແຂວງ, ນະຄອນ ແລະ ນະຄອນຫຼວງວຽງຈັນ ຂໍທິດຊີ້ນໍາ ຈາກຫົວໜ້າ ພະແນກກະສິກໍາ ແລະ ປ່າໄມ້ແຂວງຂອງຕົນ ແລ້ວຮີບຮ້ອນປະສານສົມທົບກັບຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ, ອໍານາດການປົກຄອງບ້ານ, ສັດຕະວະແພດບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈັດຕັ້ງຜັນຂະຫຍາຍ ແຈ້ງການສະບັບນີ້ ໃຫ້ໄດ້ຮັບຜົນດີ ແລະ ໃຫ້ສະຫຼຸບລາຍງານ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດ ໃຫ້ ກົມລ້ຽງສັດ ແລະ ການປະມົງ ຮັບຊາບເປັນແຕ່ລະໄລຍະ ເພື່ອມີວິທີການແກ້ໄຂ ຂໍ້ຂາດຕົກບົກຜ່ອງ ແລະ ຂໍ້ຫຍໍ້ທໍ້ຕ່າງໆ ຢ່າງທັນການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ຫົວໜ້າກົມ

ປອ ກາວິພອນ ພຸດທະວົງ

<u>ປ່ອນບ່ອນສົ່ງ:</u>

| | | |
|---|---|---|
| 1. | ຮອງລັດຖະມົນຕີກະຊວງ ກປ | 1 ສະບັບ ເພື່ອຊ່ວຍຊີ້ນໍາການຈັດຕັ້ງປະຕິບັດ |
| 2. | ຫ້ອງການກະຊວງ ກປ | 1 ສະບັບ ເພື່ອຊ່ວຍຕິດຕາມການຈັດຕັ້ງປະຕິບັດ |
| 3. | ພະແນກກະສິກໍາ ແລະ ປ່າໄມ້ແຂວງ | 1 ສະບັບ ເພື່ອຊີ້ນໍາການຈັດຕັ້ງປະຕິບັດ |
| 4. | ກົມ, ສະຖາບັນ ອ້ອມຂ້າງກະຊວງ ກປ | 1 ສະບັບ ເພື່ອຕິດຕາມການຈັດຕັ້ງປະຕິບັດ |
| 5. | ວິທະຍຸກະຈາຍສຽງແຫ່ງຊາດ | 1 ສະບັບ ເພື່ອໂຄສະນາ |
| 6. | ເກັບມ້ຽນ | 1 ສະບັບ |